
ໝູ່
ຜົນງານເລື່ອງສັ້ນ
ຂອງ...
ນັກຂຽນ
ຫນຸ່ມສາວ !
ວທີຂັ້ນໄດແກ້ວ
ມີ
ອາລົມ ຮັກ
ເຫງົາ ເສົ້າ
ດີໃຈ ເສຍໃຈ
ອິດສາ
ປາຖະຫນາ
ແລະ
ປັດຊະຍາ
ພ້ອມສຳນວນ
ບໍ່ທຳມະດາ
ຂອງ ຫນຸ່ມສາວ
ຍຸກສະໄຫມ

# ໝູ່

ສະມາຄົມ ຮ່ວມນໍ້າໃຈກັບເດັກນ້ອຍລາວ
Action with Lao Children

ໂຮມເລື່ອງສັ້ນ ຣາງວັນຂັ້ນໄດແກ້ວ

# ຫມູ່
ບ

ໂຮມເລື່ອງສັ້ນ ຣາງວັນຂັ້ນໄດແກ້ວ

**ຂຽນໂດຍ:**

ໜີນ້ອຍ, ຝັນຫວານ, ພູຜາຈຳປາລາວ, ຢາດນ້ຳ,

ຄົ້ນຫາຝັນ, ດອກມະລິ, ບົວລຽນຄິດກຽງກົງ,

ແລະ ພຸດທະຄານ ແກ້ວສາຍສິນ.


**ບັນນາທິການ:**

ດວງເດືອນ ບຸນຍາວົງ, ດາລາ ກັນລະຍາ

**ຮູບປະກອບ:**

ດວງແຂ ບຸນຍາວົງ

**ຈັດໜ້າອອກແບບປົກ:**

ບໍລິສັດ ດອກເກດການພິມ ຈຳກັດຜູ້ດຽວ.

**ຈັດພິມໂດຍ:**



ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

ໂທ: (21) 213449

**ອຸປະຖຳໂດຍ:**

JICA ອົງການຮ່ວມມືສາກົນຂອງປະເທດຍີ່ປຸ່ນ ໄຈ່ກ່າ
Japan International Cooperation Agency

ຈຳນວນ 3000 ຫົວ

ສູນວັດທະນະທຳ ແລະການຮ່ວມມືດ້ານພາສາ le centre

ຈຳນວນ 1300 ຫົວ



© ສະຫງວນລິຂະສິດ ໂດຍ

ບໍລິສັດ ດອກເກດການພິມ ຈຳກັດຜູ້ດຽວ



ພິມຄັ້ງທີ 1, ສິງຫາ 2006, ຈຳນວນ 5000 ຫົວ

ລທບ 093 ພຈ 25052006

ພິມທີ່ ຈຳປາການພິມ

# ສາລະບັນ


# 1 ຄຳນຳ

# 3 ຄຳສະເໜີ

# 6 ຄຳນຳຂອງຜູ້ຮ່ວມອຸປະຖຳ

# 14 ໃຜຜິດ - ພີນ້ອຍ -

# 24 ຮັກເຂົາຂ້າງດຽວ - ຝັນຫວານ -

# 32 ກຳແພງປະເພນີ - ພູຜາຈຳປາລາວ -

# 38 ຄຳຂໍໂທດຜ່ານສາຍລົມ - ດອກມະລິ -

# 49 ໝູ່ - ບົວລຽນດຶດກຽງກົງ -

# 57 ວິນຍານ - ພູຜາຈຳປາລາວ -

# 63 ເຖິງ... ຄົນຜ່ານທາງໃນມື້ນັ້ນ - ຍາດນ້ຳ -

# 76 ທາງອອກທີ່ດີທີ່ສຸດ - ພຸດທະຄານ ແກ້ວສາຍສິນ -

# 80 ເຂື່ອນໄຟຟ້າທີ່ຝັງໃຈ - ຄົ້ນຫາຝັນ -

# 95 ລູກຄ້າປະຈຳ - ບົວລຽນດຶດກຽງກົງ -

# 104 ອຳນາດ - ພີນ້ອຍ -

# ຄໍານໍາ

ເປັນຄວາມພູມໃຈຂອງສະມາຄົມຮ່ວມນໍ້າໃຈກັບເດັກນ້ອຍລາວ (ALC) ທີ່ໄດ້ເຫັນນັກຮຽນມັດທະຍົມ ຈາກຫລາຍໂຮງຮຽນ ຕັ້ງໃຈເຂົ້າຮັບການເຝິກອົບຮົມຍາວນານຮອດ 2-3 ປີ ກ່ອນຈະນິບຕົວຂຽນເລື່ອງສັ້ນຢ່າງເປັນການເປັນງານ.

ຜົນງານທີ່ໄດ້ຈັດພິມ ໃນໂຮມເລື່ອງສັ້ນຊຸດ " ໝູ່ " ແລະເລື່ອງອື່ນໆນີ້ ຍ່ອມເປັນພະຍານຫລັກຖານ ເປັນລາຍລັກອັກສອນວ່າ ຄວາມພະຍາຍາມຂອງບັນດານ້ອງນັກຮຽນນັ້ນ ມາຮອດຫລັກໝາຍແລ້ວ. ຂໍຂອບໃຈ ບໍລິສັດດອກເກດການພິມ ທີ່ໄດ້ຈັດຊຸດເຝິກອົບຮົມ ທີ່ມີຊື່ວ່າ " ຂັ້ນໄດແກ້ວ " ໃນຄັ້ງນີ້ ແລະຂໍຂອບໃຈຄູອາຈານທຸກທ່ານທີ່ໄດ້ສະຫລະເວລາອັນມີຄ່າ ກໍ່ສ້າງລູກຫລານ ແລະຈັບປາກກາໃສ່ມືຂອງຂະເຈົ້າ ຈົນປາກົດຜົນອອກມາໃຫ້ສັງຄົມໄດ້ຊື່ນຊົມນໍາ.

ສະມາຄົມຮ່ວມນໍ້າໃຈກັບເດັກນ້ອຍລາວ ຍາມໃດກໍ່ຕ້ອງການສົ່ງເສີມເດັກນ້ອຍລາວ ໃຫ້ອ່ານປຶ້ມຫລາຍໆ

ເພື່ອພັດທະນາພາສາລາວຂອງຕົນໃຫ້ດີ ເພື່ອໃຊ້ໃນການສຶກສາ ແລະປະກອບອາຊີບໃນອະນາຄົດ. ບັດນີ້ນັກຂຽນໜຸ່ມທັງແປດທ່ານ ຍັງຢືນໃຫ້ພວກເຮົາເຫັນແລ້ວວ່າ ຄວາມສາມາດໃນການເປັນນາຍຂອງພາສານັ້ນ ແມ່ນນຳຜົນປະໂຫຍດມາສູ່ຄົນເຮົາຢ່າງຫລວງຫລາຍ ເມື່ອສັງຄົມຍອມຮັບວ່າເຂົາຜູ້ນັ້ນເປັນ " ນັກຂຽນ"

ຂໍໃຫ້ພວກນ້ອງຂຽນ ແລະຂຽນຕໍ່ໄປ.

ພິເສດ ໃນການພິມຄັ້ງນີ້ ALC ຍັງໄດ້ຮັບການສະໜັບສະໜູນດ້ານການພິມ ຈາກສູນວັດທະນະທຳ ແລະການຮ່ວມມືດ້ານພາສາປະເທດຝຣັ່ງ (CCCL)ປະຈຳ ສ.ປ.ປ.ລາວ ນຳ ຍ້ອນວ່າມີອຸດົມການຄືກັນຢູ່ບ່ອນວ່າ ຢາກເຫັນຄົນໄວໜຸ່ມຂອງລາວ ປະກອບສ່ວນໃຫ້ແກ່ສັງຄົມ ດ້ວຍຄວາມສາມາດຂອງຂະເຈົ້າເອງ. ຈຶ່ງຂໍຂອບໃຈນຳ CCCL ເປັນຢ່າງຍິ່ງມານະທີ່ນີ້ດ້ວຍ.

*ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ*

Action with Lao Children

# ຄໍາສະເຫນີ

## ກ່ອນຈະມາເປັນເລື່ອງສັ້ນ
## "ຮາງວັນຂັ້ນໄດແກ້ວ"

ຮາງວັນຂັ້ນໄດແກ້ວແມ່ນຫຍັງ ເກີດຂຶ້ນໄດ້ຢ່າງໃດ ໃຜເປັນຜູ້ກໍ່ຕັ້ງ ໆລໆ ຄໍາຕອບສໍາລັບຄໍາຖາມເຫລົ່ານີ້ ເຄີຍບອກກ່າວກັນໄປແລ້ວແຕ່ມື້ທໍາອິດທີ່ ລາຍການຂັ້ນໄດແກ້ວເລີ່ມດໍາເນີນລາຍການ ລຸນຫລັງການກໍ່ຕັ້ງບໍລິສັດດອກເກດການພິມ ໄດ້ສອງປີ. ໂດຍຕັ້ງເຈດຕະນາໄວ້ວ່າ ຈະກໍ່ສ້າງສິ່ງເສີມນັກຂຽນຮຸ່ນໃຫມ່ ເພື່ອຕື່ມສີສັນໃຫ້ແກ່ວົງການປະດິດແຕ່ງຂອງລາວ ຕາມຄວາມສາມາດ ແລະກໍາລັງສະຕິປັນຍາທີ່ມີ.

ນາງດາຣາ ວີຣະວົງ ກັນລະຍາ ຫົວຫນ້າບັນນາທິການ ຂອງບໍລິສັດ ເປັນຜູ້ຕັ້ງຊື່ລາຍການນີ້ໃຫ້ ໂດຍອະທິບາຍເຖິງຄວາມຫມາຍທີ່ມາ ຢ່າງຫນ້າສົນໃຈວ່າ "ຂັ້ນໄດແກ້ວ" ແມ່ນຂັ້ນໄດໄມ້ສັ້ນໆ ທີ່ພະສົງໃຊ້ຫ້ອຍຕາມຝາ ເພື່ອເອົາຄໍາພີໃບລານມ້ຽນໄວ້ໃນວັດ ເພື່ອສະດວກໃນການໃຊ້ສອຍຄໍາພີດີກາ ເອົາມາອ່ານ ທ່ອງ ຫລື ຂຶ້ນເທດ ໃຫ້ອອກຕົນຍາດໂຍມຟັງຍາມວັນສິນ ໂດຍສະເພາະ ວັດໃດບໍ່ມີຫນັງສືໃບລານຫລາຍ ບໍ່ທັນມີຫໍໄຕ ກໍຕ້ອງມີຂັ້ນໄດແກ້ວ ເປັນອັນ

ທຳອິດ ເພື່ອມ້ຽນມັດຫນັງສືດີມີຄຸນຄ່າ ສຳລັບທຸກຄົນນັ້ນ ປາກົດວ່າ ເມື່ອໄດ້ຮັບຮູ້ຄວາມຫມາຍຂອງ "ຂັ້ນໄດແກ້ວ" ຢ່າງນີ້ແລ້ວ ພວກເຮົາທັງຫລາຍຕ່າງກໍຕິດໃຈ ພໍໃຈຊື່ນີ້ ແລະຮັບເອົາເປັນຊື່ລາຍການ ສຳລັບການພົບປະແລກປ່ຽນ ບົດຮຽນລະຫວ່າງ ພວກນ້ອງໆ ລູກຫລານທີ່ມັກຂຽນ ມັກ ອ່ານ ທີ່ມາພົບກັນໃນທຸກໆວັນເສົາ ສຸດທ້າຍຂອງເດືອນ ນັບແຕ່ ກາງປີ 2003 ມາ. ໃນການພົບປະກັນແຕ່ລະຄັ້ງ ມີນັກຂຽນອາວຸໂສ ມາໃຫ້ບົດຮຽນການປະພັນ ການແຕ່ງ ບໍ່ວ່າກາບກອນ ຫລື ເລື່ອງສັ້ນ ເລື່ອງຍາວ, ມີການນຳສະ ເຫນີ ບົດວັນນະຄະດີເດັ່ນໆ ທັງໃນອະດີດ ແລະປັດຈຸບັນແລະ ພິເສດສຸດ ພາຍຫລັງດຳເນີນມາໄດ້ລະຍະນຶ່ງແລ້ວ ຜູ້ມັກ ອ່ານ ມັກຟັງທັງຫລາຍ ທີ່ໄດ້ຊື່ວ່າເປັນສະມາຊິກຂອງ "ລາຍການຂັ້ນໄດແກ້ວ" ກໍລົງມືຈັບປາກກາຂຽນເອງ ແລະ ນຳເອົາບົດຂຽນຂອງຕົນມາອ່ານສູ່ກັນຟັງ ປັບປຸງແລ້ວ ປັບປຸງອີກ ພາຍຫລັງການຕິຊົມຂອງຫມູ່ຄູ່ ແລະນັກຂຽນ ຜູ້ອາວຸໂສ.

ຕົກມາຮອດເດືອນ ເມສາ (04) ປີ 2004 ບໍລິສັດ ດອກເກດໄດ້ຈັດເຝິກອົບຮົມ "ພື້ນຖານການຂຽນເລື່ອງສັ້ນ" ຢ່າງເປັນລະບົບ ໃນທຸກໆວັນເສົາທ້າຍເດືອນ ແຕ່ເວລາ 14.00 ເຖິງ 17. 00 ໂມງ ໂຮມ 15 ຄັ້ງ ຫລື 45 ຊົ່ວໂມງ ແລະ

ເປີດບັ້ນແຂ່ງຂັນເລື່ອງສັ້ນຂອງສະມາຊິກ "ຂັ້ນໄດແກ້ວ" ໃນວັນທີ 24/06/05 ປິດຮັບໃນວັນທີ 24/09/05, ມີຜູ້ສົ່ງເລື່ອງເຂົ້າປະກວດທັງຫມົດ 22 ບົດ. ກຳມະການ ຕັດສິນປະກອບດ້ວຍ ນັກຂຽນອາວຸໂສສາມທ່ານ ຄື (1) ດາຣາ ກັນລະຍາ (2) ໂອທອງ ຄຳອິນຊູ ແລະ (3) ດວງເດືອນ ບຸນຍາວົງ. ການຕັດສິນຄັດເລືອກໃຫ້ຮາງວັນ ມີຜົນດັ່ງລຸ່ມນີ້:

| ປະເພດຮາງວັນ | ຊື່ເລື່ອງ | ຜູ້ຂຽນ |
|---|---|---|
| ທີ 1 | ເສືອດຳຫລີ່ຜີ | ບົວລຽນ ວົງສີສຸພັນ |
| ທີ 2 | ໃຜຜິດ | ວິລະສັກ ວິຣະວົງ |
| | ວິນຍານ | ບຸນຖົມ ວົງວອນ |
| | ຫມູ່ | ບົວລຽນ ວົງສີສຸພັນ |
| | ຄຳຂໍໂທດຜ່ານສາຍລົມ | ນວນດຳ ກົມມະນາ |
| ທີ 3 | ເຂື່ອນໄຟຟ້າທີ່ຝັງໃຈ | ສົມສະນິດ ບົວທອງປະເສີດ |
| | ຮັກເຂົາຂ້າງດຽວ | ທອງຄຳ ຈັນທະວົງ |
| | ທາງອອກທີ່ດີທີ່ສຸດ | ພຸດທະລານ ແກ້ວສາຍສິນ |
| | ອຳນາດ | ວິຣະສັກ ວິຣະວົງ |

24/VII
ຫ້າມຈຳໜ່າຍ

ເນື່ອງຈາກງົບປະມານຈຳກັດ ການໃຫ້ຣາງວັນຈຶ່ງບໍ່ຄົບຖ້ວນ ທັງໆທີ່ມີເລື່ອງໜ້າໄດ້ຣາງວັນຢູ່ອີກຈຳນວນນຶ່ງ ດັ່ງນັ້ນ ໃນການຈັດພິມຄັ້ງນີ້ ຈຶ່ງໄດ້ຈັດເອົາບາງເລື່ອງ ທີ່ເຖິງວ່າບໍ່ໄດ້ຮັບຣາງວັນ ມາພິມຮ່ວມນຳ ພິເສດໄດ້ຈັດເອົາເລື່ອງຂອງ ດວງໃຈ ແປງມະນີວົງ ເຂົ້ານຳ ແລະບໍ່ໄດ້ເອົາເລື່ອງທີ່ໄດ້ຣາງວັນທີ 1 ຄືເລື່ອງ ເສືອດຳຫລີ່ຜີ ເພາະຍາວເກີນໄປ ແລະຄິດວ່າເໝາະທີ່ ຈະພິມຕ່າງຫາກ ເມື່ອໃດມີທຶນຮອນພຽງພໍ ແລະໃນທີ່ສຸດແລ້ວ ກໍແມ່ນທ່ານຜູ້ອ່ານພຸ້ນ ທີ່ຈະເປັນຜູ້ຕັດສິນຂັ້ນສຸດທ້າຍ.

ປຶ້ມຫົວນີ້ ຄົງບໍ່ສາມາດມີຕົວຕົນຂຶ້ນມາໄດ້ ຖ້າປາສະຈາກການປະກອບສ່ວນຂອງຫລາຍຜູ້ຫລາຍຄົນ ທັງທີ່ມາຮ່ວມຮັບຟັງ ໃຫ້ການຕິຊົມບົດຂຽນ ແລະນຳສະເໜີຜົນງານ ຂອງຕົນມາຕະຫລອດສາມປີ. ໂດຍສະເພາະຄະນະຮັບຜິດຊອບຄື ດວງໃຈ ແປງມະນີວົງ ຜູ້ດຳເນີນລາຍການຂັ້ນໄດແກ້ວ ມາແຕ່ຕົ້ນ, ດວງແຂ ບຸນຍາວົງ ຜູ້ລິເລີ່ມສ້າງກິດຈະກຳ, ອາຈານ ບຸນເຕີມ ສີບຸນເຮືອງ ທີ່ມາໃຫ້ຄວາມຮູ້ຄວາມມ່ວນຂອງລົດຊາດກະວີນິພົນແກ່ສະມາຊິກຮຸ່ນໃໝ່, ອາຈານ ໂອທອງ ຄຳອິນຊູ ຜູ້ບໍ່ຍອມອິດເມື່ອຍໃນການນຳສະເໜີ ແລະໃຫ້ບົດຮຽນອັນອຸດົມສົມບູນ ແກ່ພວກນ້ອງໆ

ແລະພິເສດສຸດ ລຸງບຸນຍົກ ແສນສຸນທອນ ແລະ ນັກຂຽນ ອາວຸໂສ ດາຣາ ກັບລະຍາ ທີ່ອຸທິດເວລາອັນມີຄ່າ ມາຈັດການເຝິກອົບຮົມຕິດຕໍ່ກັນ ຕະຫລອດເວລາເກືອບສອງປີ

ຄະນະບັນນາທິການ ບໍລິສັດດອກເກດ ຂໍຂອບໃຈ "ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ" ທີ່ໃຫ້ການສະໜັບສະໜຸນການຈັດພິມ ທີ່ມີຄວາມໝາຍສຳຄັນຕໍ່ອະນາຄົດຂອງນັກຂຽນໜຸ່ມຮຸ່ນນີ້ ເປັນຢ່າງຍິ່ງ. ຫວັງວ່າກຳລັງໃຈທີ່ພວກນັກຂຽນຮຸ່ນນີ້ໄດ້ຮັບ ຈະຊ່ອຍຫລໍ່ລ້ຽງເສີມພະລັງເຊື້ອງຊ້ອນຢູ່ພາຍໃນ ຂອງແຕ່ລະຄົນອອກມາ ໃຫ້ຈໍ່ດອກອອກໝາກຕໍ່ໄປເລື້ອຍໆ.

ບັດນີ້ ຜົນງານນ້ອຍໆແຫ່ງຈິນຕະນາການ ຄວາມຝັນອັນສູງສົ່ງ ຂອງລູກຫລານຜູ້ໜຸ່ມນ້ອຍ ຂອງພວກເຮົາກໍໄດ້ປາກົດອອກມາສູ່ສາຍຕາທ່ານແລ້ວ ມ່ວນຊ່ຳໃດ ໜ້າອ່ານຊ່ຳໃດ ໜ້າຕິດຕາມນຳອ່ານບໍ່? ໜ້າຊຸກຍູ້ພວກເຂົາແນວໃດ ຂາດຕົກບົກພ່ອງປະການໃດ ແມ່ນທ່ານ ເປັນຜູ້ຕັດສິນ.

18 ພຶດສະພາ 2006<br>
ດວງເດືອນ ບຸນຍາວົງ<br>
ຜູ້ອຳນວຍການ ດອກເກດການພິມ<br>
ເຈົ້າຂອງລາຍການ ຂັ້ນໄດແກ້ວ

# AVANT - PROPOS

Le Centre culturel et de coopération linguistique de Vientiane a notamment pour vocation de soutenir la création locale dans ses différentes formes d'expression. La valorisation de l'Ecrit, l'encouragement à la lecture, le soutien à l'édition, la professionnalisation des métiers du Livre, sont les objectifs que le Centre s'est fixé.
C'est donc avec grand plaisir que j'ai accepté de participer à l'édition de ces onze nouvelles.

Le lecteur va découvrir des textes inédits, souvent les fruits d'un travail collectif réalisé au sein des ateliers d'écriture par de jeunes auteurs. Ces onze nouvelles nous font partager leurs préoccupations et nous livrent leur vision de la société et de la ville. Textes de fiction, ils s'appuient sur la vie quotidienne et sur des évènements vécus par certains. Si l'on y retrouve des thèmes communs à la jeunesse urbaine du monde entier, l'empreinte de la société laotienne en pleine évolution est bien présente.

*Gilles Lainé*

Conseiller d'Action Culturelle

Ambassade de France en RDP LAO

Service de Coopération d'Action Culturelle

# ຄໍານໍາຂອງຜູ້ຮ່ວມອຸປະຖໍາ

ແຕ່ໃດໆມາ ສູນວັດທະນະທໍາ ແລະການຮ່ວມມື ດ້ານພາສາທີ່ວຽງຈັນ (CCCL) ໄດ້ເລັ່ງໃສ່ອູ້ມຊູການ ປະດິດສ້າງຂອງຄົນລາວໃນຮູບແບບຕ່າງໆ. ການສົ່ງເສີມ ດ້ານການຂຽນ ການອ່ານ ການອຸປະຖໍາດ້ານການຈັດພິມ ຄະຫລອດເຖິງການເຝິກອາຊີບທີ່ກ່ຽວຂ້ອງກັບປຶ້ມຕັ້ງແມ່ນ ວັດຖຸປະສົງ ທີ່ທາງສູນ CCCL ໄດ້ຕັ້ງເປົ້າຫມາຍເອົາໄວ້.

ຂ້າພະເຈົ້າຈຶ່ງມີຄວາມຍິນດີຢ່າງຍິ່ງ ທີ່ໄດ້ຮ່ວມ ສະໜັບສະໜູນ ການຈັດພິມເລື່ອງສັ້ນທັງສິບເອັດເລື່ອງນີ້.

ທ່ານຜູ້ອ່ານຈະໄດ້ຄົ້ນພົບບົດຂຽນທີ່ໃໝ່ອຽມ ອັນ ເປັນຫມາກຜົນຂອງການເຮັດວຽກລວມຫມູ່ຂອງກຸ່ມນັກ ຂຽນຜູ້ໜຸ່ມນ້ອຍຈໍານວນໜຶ່ງ.

ເລື່ອງສັ້ນທັງສິບເອັດເລື່ອງນີ້ ຈະບອກເຮົາວ່າ ຊາວໜຸ່ມລາວພວມເຮັດຫຍັງ ແລະມີຄວາມມຸ່ງຫວັງຫຍັງ ແດ່ຕໍ່ສັງຄົມ ແລະບ້ານເມືອງຂອງຂະເຈົ້າ. ທັງໝົດເປັນ ເລື່ອງແຕ່ງຂຶ້ນ ເນັ້ນສະເພາະຊີວິດປະຈໍາວັນ ແລະເຫດ ການທີ່ຜູ້ຂຽນອາດເຄີຍມີປະສົບການມາແດ່.

ຖ້າຫາກຜູ້ອ່ານເຫັນວ່າ ເປັນເລື່ອງທີ່ຄ້າຍຄືກັບເລື່ອງຂອງຊາວໜຸ່ມໃນຕົວເມືອງອື່ນໆ ໃນທົ່ວໂລກ ກໍໝາຍວ່າໃບໜ້າຂອງສັງຄົມລາວທີ່ພວມເບັ່ງບານ ກໍໄດ້ຖືກນຳສະເໜີແລ້ວນະທີ່ນີ້.

*ຈິນເລີ ແລເບ*

ທີ່ເປີກສາກິດຈະກຳວັດທະນະທຳ

ສະຖານເອກອັກຄະລັດຖະທູດຝຣັ່ງ ປະຈຳ ສ.ປ.ປ.ລາວ.

ຜະແໜກການຮ່ວມມືກິດຈະກຳວັດທະນະທຳ

# ໃຜຜິດ




ໂດຍ ໝີນ້ອຍ

## " ຂາວ ! ຂາວ ! ມານີ້ໄວ ! "

ສຽງພໍ່ເຖົ້າຂ້ອຍຮ້ອງ ແລ້ວມັນກໍແລ່ນມາຫາ, ຈາກນັ້ນພໍ່ເຖົ້າຂ້ອຍ ກໍຈັບມັນມັດໄວ້ຢູ່ກ້ອງໂຕະຫີນຢູ່ໜ້າບ້ານ ອີກຕາມເຄີຍຄືທຸກໆມື້.

ແຂກຂາປະຈຳຮ້ານກາເຟຂອງຂ້ອຍ ເລີ່ມທະຍອຍກັນມາເພື່ອກິນກາເຟ, ບ້ານຂ້ອຍເປັນຮ້ານຂາຍກາເຟ ແລະຮ້ານອັດເອກະສານນຳ ເພາະຕັ້ງຢູ່ແຄມທາງ ຈຶ່ງເໝາະສົມ. ໃນແຕ່ລະມື້ມີຄົນທຽວເຂົ້າ-ອອກຫຼາຍ, ໝາ ກໍຄືບັກຂາວ ຈຶ່ງຖືກມັດໄວ້ເພາະຢ້ານມັນຊິໄລ່ແຂກ ແຕ່ສ່ວນໃຫຍ່ກໍບໍ່ມີໃຜຢ້ານມັນດອກ ເພາະມັນໂຕນ້ອຍ ເຖິງວ່າອາຍຸຈະໄດ້ເກືອບປີແລ້ວ ແຕ່ຂະໜາດຕົນໂຕຂອງມັນສ່ຳໆກັບໝາຫາກໍສອງເດືອນນີ້ລະ ແຕ່ກໍຍັງມີພວກຢ້ານໝາອີກຈຳນວນນຶ່ງຢູ່.

ສາເຫດທີ່ມັດມັນ ກໍບໍ່ໄດ້ມີເຫດຜົນດຽວນີ້ດອກ ໝາໂຕນີ້ ມັນຂີ້ດີ້ ກະວ່າບໍ່ໄດ້ ແນວວ່າມັນເປັນໝາມັນກໍດີ້ແບບໝາ ແລ່ນໄປທັ້ນມາໜີ້ ບໍ່ຈັກເທົ່າບໍ່ຈັກຫອນຢູ່ບໍ່ເຊົາ ແລະທີ່ຕ້ອງແຮ່ງມັດເລີຍ ກໍ່ຍ້ອນຢ້ານມັນຕາຍ ແນວມັນມັກແລ່ນຂ້າມທາງ, ຖ້າຂ້າມໄປແລ້ວໄປແລ່ນເລາະຫຼິ້ນດິນແລ້ວກັບມາກໍຍັງໄຄແດ່ ແຕ່ມັນຊໍ້າຜັດແລ່ນຂ້າມໄປຂ້າມມາ ຂ້ອຍລະຢ້ານລົດໃຫຍ່ຢຽບມັນຕາຍກໍປານນັ້ນ ຫລືບໍ່ກໍຢ້ານມັນແລ່ນໄປຕັດໜ້າລົດຈັກຂະເຈົ້າ ຊິໄດ້ເສຍເງິນຕື່ມຊໍ້າກໍເລີຍໄດ້ມັດໄວ້.ຫລາຍຄົນກໍວ່າໝາໄປມັດໄວ້ມັນແຮ່ງຮ້າຍ ເລື່ອງນີ້ຂ້ອຍກໍຮູ້ດີຢູ່ ແຕ່ກໍຈໍາເປັນຕ້ອງມັດ ຢ່າງໜ້ອຍກໍຍັງ ໄດ້ປ່ອຍຕອນກາງຄືນ ໃຫ້ມັນຮ້າຍທັ້ນລະດີ ຈື່ງເຝົ້າບ້ານຕອນກາງຄືນໄດ້ດີ.

ທໍາອິດທີ່ເອົາມາຈາກບ້ານປ້າຂ້ອຍ ມັນໂຕນ້ອຍໆຂົນຟູໆສີນໍ້າຕານປົນສີຂາວ ມັນເປັນຕາຮັກຕາແພງອີ່ຫລີ ມັນບໍ່ສົນໃຈສິ່ງອ້ອມຮອບຕົວມັນເລີຍ ມີແຕ່ກິນກັບນອນ ແຕ່ພໍໄດ້ປະມານເດືອນປາຍນີ້ແລ້ວ ມັນກົງກັນຂ້າມກັນເລີຍ ແບບວ່າຈາກໜ້າມືເປັນຫລັງມື, ມັນແລ່ນພຸ້ນແລ່ນພີ້, ເຊົ້າແຕ່ລະຄາບ ຂ້ອຍກະເກືອບັກຫລາຍໆ ມັນກິນຂອງມັນແລ້ວ ມັນຍັງບໍ່ພໍ ຍັງແລ່ນເຂົ້າໄປໃນເຮືອນໄປ ຫລັງບ້ານ ແລ້ວຍາດກິນນໍາແມວ ແຕ່ມັນບໍ່ເຄີຍຮ້າຍ ແລະກັດແມວ ມັນມີແຕ່ຢອກ, ແມວໂຕນັ້ນ ບາງເທື່ອກໍເລຍແບບໄຈ້ໝົດໃຫ້ ປານກັບວ່າ ບັກຂາວແມ່ນລູກຂອງມັນເອົາໂລດ

ແຕ່ລະຍະຫລັງມານີ້ ແມວໂຕນັ້ນອອກລູກແລ້ວ ບັກຂາວກໍເຂົ້າໃກ້ບໍ່ໄດ້ເລີຍ.

ບັກຂາວມັນຕຸ້ຍຂຶ້ນຕຸ້ຍຂຶ້ນ ຖືກໃຈຂ້ອຍຫຼາຍ ຕຸ້ຍຄືເຈົ້າຂອງເລີຍ ມັນກິນນຳຂ້ອຍທຸກຢ່າງ ຄືວ່າມັນເຫັນຂ້ອຍກິນຫຍັງແມ່ນກິນນຳໝົດ ໝາກໄມ້ທີ່ມັນມັກກິນແມ່ນໝາກລຳໄຍກັບໝາກກ້ຽງ, ມີເທື່ອໜຶ່ງຂ້ອຍລອງເອົາໝາກຕາກົບໃຫ້ມັນກິນ ທຳອິດມັນກໍດົມເບິ່ງກ່ອນ ແລ້ວກໍຍ່າງໜີ, ຂ້ອຍລອງອີກເທື່ອໜຶ່ງ ແຕ່ເທື່ອນີ້ ຂ້ອຍບີບໃຫ້ນ້ຳຫວານໆ ຢູ່ທາງໃນອອກມາ ແລ້ວມັນກໍລອງເລຍເບິ່ງ ແລ້ວກໍກິນ.

ແຂກເຂົ້າມາເຕັມຮ້ານແລ້ວ ສຽງໂອ້ລົມກັນແຕ່ເຊົ້າກໍເກີດຂຶ້ນຢູ່ນີ້ທຸກມື້ ຂ້ອຍຫລຽວເບິ່ງໂມງ ກໍຫາ 7 ໂມງເຊົ້າ ມື້ປົກກະຕິ ແຂກກໍລົມກັນຮອດ 8 ໂມງປາຍ ຫລື ເຄິ່ງ ກໍຈະເລີກໄປວຽກໃຜວຽກມັນ ແຕ່ສຳລັບວັນເສົາ ແລະອາທິດແລ້ວ ແມ່ນຮອດ 10 ໂມງ ຫລື 11 ໂມງກໍມີ. ໃນນັ້ນ ກໍມີຄົນເຂົ້າມາກິນກາເຟແນ່, ບາງຄົນກໍມາຊື້ເຄື່ອງ, ອັດເອກະສານ ຫລື ທັງມາຊື້ທັງມາກິນກາເຟກໍມີ.

ທ່າມກາງຄວາມຟົດຟື້ນໃນຍາມເຊົ້າ ແຕ່ບັກຂາວມັນ ກັບນອນຢ່າງສະຫງົບຢູ່ບ່ອນອື່ນ, ໂດຍປົກກະຕິແລ້ວ ສັນຊາດຕະຍານຂອງໝາແມ່ນ ເວລາມີຄົນແປກໜ້າເຂົ້າມາເຮືອນ ມັນກໍຕ້ອງຂູ່ດ້ວຍການເຫົ່າ ເຊິ່ງຂໍ້ນີ້ບັກຂາວເຮັດໄດ້ດີ ແຕ່ມີຂໍ້ດີກໍຕ້ອງມີຂໍ້ເສຍຕິດໄປນຳກັນຄື: ບັກຂາວ ມັກໄປເຮືອນຄົນອື່ນ ແລ້ວໄປເຫົ່າເຈົ້າຂອງເຮືອນ ຫລືຄົນທີ່ເຂົ້າມາ ປານກັບວ່າແມ່ນເຮືອນຂອງມັນເອງ.

ສຽງໂສເຫລ້ກັນສົນລະວົນ ຕ່າງຄົນຕ່າງເວົ້າ ບໍ່ຈັກວ່າລົມເລື່ອງຫຍັງກັນ ຂ້ອຍໄປນັ່ງຟັງເບິ່ງກໍພໍເດົາໆອອກ ບາງຄົນກໍເວົ້າ

ເລື່ອງການບ້ານການເມືອງ ບາງຄືນກໍເວົ້າເລື່ອງກິລາ ຫຼືເວົ້າເລື່ອງວຽກງານສວນໄຕກໍມີ. ຕ່າງຄືນກໍຕ່າງເມົາມັນກັບການລົມ ເວລາຄ່ອຍຜ່ານໄປ ບາງຄືນ ກໍກັບກ່ອນ ແຕ່ສ່ວນໃຫຍ່ ຍັງນັ່ງລົມກັນຕໍ່ໄປຈົນພາກັນເລີກພ້ອມກັນ ເພາະໃກ້ຈະສວາຍແລ້ວ ມາຮອດຕອນນີ້ຂ້ອຍງວາກໄປເບິ່ງໂມງອີກບາດນຶ່ງ 10 ໂມງເຄິ່ງແລ້ວ, ມື້ນີ້ວັນເສົາກໍເລີຍພາກັນເລີກສວາຍແດ່.

" ແດດມື້ນີ້ ຈັ່ງແມ່ນພິລຶກ " ຂ້ອຍຈົ່ມຢູ່ຄົນດຽວ ມີກໍຕີບທິວບັກຂາວຫລິ້ນ ມັນກໍຍັງນອນຢູ່ ໂດຍບໍ່ສົນໃຈໃຜ.

ແດດກ້າຫລາຍ ຈົນຫລຽວເບິ່ງຕາມທາງ ເຫັນເປັນອາຍຮ້ອນວື່ງ ຄືກັບວ່າມີແປວໄຟກຳລັງລຸກໄໝ້ຢູ່ຕາມທົ່ນທາງ ແດດສ່ອງເຂົ້າມາໃນຮົ່ມຫລັງຄາເຮືອນເບື້ອງທີ່ມັດບັກຂາວ ຂ້ອຍກໍເລີຍຍ້າຍມັນໄປມັດໄວ້ໂອ່ນຊາກອງກົກຄອມ ເພາະມັນຮົ່ມເຢັນດີ.

ກົກຄອມທີ່ວ່ານີ້ ບໍ່ແມ່ນຂອງເຮືອນຂ້ອຍດອກ ແຕ່ຢູ່ຟາກຮົ້ວເບື້ອງນັ້ນເຊິ່ງເປັນດິນຕູ້ແກ້ວ. ຕູ້ແກ້ວລາວປຸກເຮືອນນ້ອຍຫລັງນຶ່ງໄວ້ນອນເຝົ້າເປັດໄກ່ ເພາະລາວມີຄອກໃຫຍ່ສົມຄວນ ແລະຕໍ່ຄອກໄກ່ລົງໄປ ກໍແມ່ນ ສ້າງວຽນໄກ່ຕີ ເຊິ່ງຕູ້ແກ້ວຫັ້ນລະທີ່ເປັນເຈົ້າຂອງ ຈະວ່າໄປແລ້ວ ກົກຄອມກົກນີ້ ກໍບໍ່ໃຫຍ່ປານໃດ ແຕ່ງ່າຂອງມັນເອ່ນມາທາງບ້ານຂ້ອຍຫລາຍ ກໍເລີຍໄດ້ຮົ່ມ ພໍ່ເຖົ້າຂ້ອຍເລີຍເອົາໂອ່ນຊາໄປໄວ້ຫັ້ນ ແລະມັກໄປນອນຫຼິ້ນຕອນບ່າຍ, ແຕ່ລະຍະຫລັງມາ ພໍ່ເຖົ້າຂ້ອຍກໍບໍ່ໄປນອນແລ້ວ ເພາະມີຕໍ່ທົວເສືອມາສ້າງຮັງຢູ່ຫັ້ນ ຄວາມຈິງແລ້ວໄປນອນມັນກະຄືຊິບໍ່ເປັນຫຍັງ ແຕ່ກໍບໍ່ມີໃຜກ້າສ່ຽງໄປນັ່ງຫລິ້ນຢູ່ຫັ້ນເລີຍ.

ແຂກປະຈຳຮ້ານຫລາຍຄົນກໍມັກເວົ້າວ່າ ຄືບໍ່ໄປຈ້າງຄົນໃຫ້ມາເຜົາເອົາຮັງມັນອອກ ຈັກໜ້ອຍມັນກະບິນເຂົ້າໄປຕອດຄົນໃນເຮືອນຊໍ້າດອກ. ແມ່ຂ້ອຍກໍມັກຕອບວ່າ ຕູ້ແກ້ວບໍ່ໃຫ້ເອົາອອກລາວວ່າ ປະໃຫ້ມັນຢູ່ຕາມທຳມະຊາດຂອງມັນຈັນມັນຮ້າງ ແລ້ວຈຶ່ງຊິເອົາໄວ້ເອ້ຢູ່ເຮືອນ.

" ຕູ່ ! ຍ່າງລົງໄປຫລິ້ນຢູ່ໄຟຟ້າ ໄປ່ "

" ຖ້າແນ່ງ ໃສ່ເກີບກ່ອນ "

ນ້ອຍ ໝູ່ຂ້ອຍມາຊວນໄປເບິ່ງຂະເຈົ້າຕີບູ້ນ (Boule) ຢູ່ຫ້ອງການໄຟຟ້າປະຈຳແຂວງວຽງຈັນ ເຊິ່ງຢູ່ໃກ້ກັບເຮືອນຂ້ອຍທີ່ນອນຢູ່ໃນບ້ານໂພນໝີ. ບັນດາພະນັກງານໄຟຟ້າທັງຫລາຍຕ່າງກໍເປັນນັກກິລາຕີບູ້ນ (Boule) ທີ່ເກັ່ງທັງນັ້ນ. ນ້ອຍກັບຂ້ອຍມັກຍ່າງໄປຫລິ້ນຢູ່ຫັ້ນປະຈຳ ໃນຕອນບ່າຍ ພາກັນໄປນັ່ງເບິ່ງເພິ່ນຫລິ້ນຖ້າບໍ່ມີຄົນຫລາຍປານໃດ ກໍພາກັນໂຍນໄປໂຍນມາ ຫລືບາງເທື່ອກໍຕັ້ງທີມຫລິ້ນ ແບບເອົາແທ້ເອົາວ່າ ບາງເທື່ອກໍຕີກິນນ້ຳແປັບຊີ້ກັນ.

" ຮ້ອນເນາະມື້ນີ້ " ຂ້ອຍຈົ່ມໃຫ້ນ້ອຍຟັງ, ພ້ອມທັງຈົກຜ້າອອກມາແຕ່ຖົງໂສ້ງເພື່ອມາເຊັດເຫື່ອ.

" ຫັ້ນລະຕຸ້ຍຫລາຍ ນັ່ງຢູ່ຊື່ໆກະເຫື່ອອອກ " ສຽງນ້ອຍເວົ້າແບບມີລັກສະນະເວົ້າໃສ່ແກມຍອກຕາມພາສາຄົນເປັນສຽວກັນນີ້ລະ.

" ເມືອໄປ໋ ຮ້ອນໂພດນະ " ຂ້ອຍຊວນນ້ອຍ

" ເມືອກະເມືອຊັ້ນ " ນ້ອຍຕອບຄືບໍ່ເຕັມໃຈປານໃດ ຄືຢາກເບິ່ງຕໍ່ຢູ່.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ